# ໂຮງຮຽນວັນອາທິດ

**ວັນອາທິດ ທີ 22 ເດືອນພຶສຈິກາ 2020 (11-22-2020)**

---

## ຍຶດໝັ້ນໃນການນະມັສການຂອງພຣະອົງ.

ທ່ານເຄີຍຖືກຄວາມເລົ້າໃຈໃນເວລາທີ່ຕື່ນເຕັ້ນບໍ່?

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຊົງສົມຄວນໄດ້ຮັບການນະມັສການແລະຄຳຍ້ອງຍໍສັຣເສີນຂອງພວກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກເຮົາມີຫຼາຍເຫດຜົນທີ່ຈະຮັກລະດູໃບໄມ້ຫຼົ່ນ; ໃບໄມ້ປ່ຽນສີ, ດິນຟ້າອາກາດເຢັນລົງ, ແລະລະດູຟຸດບອນກໍມາຮອດ. ເດັກນ້ອຍຜູ້ຊາຍໃນເມືອງນ້ອຍໆແລະໃຫ່ຽຈະໃສ່ເຄື່ອງປ້ອງກັນເອີກແລະໝວກກັນກະທົບເພື່ອໃຫ້ເຂົາສາມາດຫຼິ້ນບານທີ່ປະທະກັນດ້ວຍຄວາມຮຸນແຮງທີ່ອາດນຳໄປເຖິງການບາດເຈັບ. ແຟນໆບານກໍພາກັນຫຼັ່ງໄຫຼເຂົ້າສູ່ສນາມກິລາເພື່ອເປັນກຳລັງໃຈໃຫ້ກັບສິ່ງທີ່ໄດ້ກາຍເປັນການບັນເທີງທີ່ສຸດຍອດຂອງຊາວອາເມຣິກັນເພື່ອຂ້າເວລາ. ຄົນທີ່ເບິ່ງເກມເຫຼົ່ານີ້ເອີ້ນວ່າແຟນໆ-ເປັນຄຳສັບທີ່ຫຍໍ້ມາຈາກຄຳວ່າແຟນບານ-ແລະດ້ວຍເຫດຜົນທີ່ດີ. ການປະພຶດຂອງພວກເຂົາມັກຈະເປັນເໝືອນແຟນກິລາ. ເມື່ອທີມຂອງພວກເຂົາໄດ້ຄະແນນ, ແຟນໆພ້ອມກັນຮ້ອງໂຮຂຶ້ນດ້ວຍສຽງດັງ. ຂນະທີ່ແຟນໆຮ້ອງສຽງດັງແລະເບີກບານມ່ວນຊື່ນ, ພວກເຂົາກໍ່ເຕັ້ນໄປເຕັ້ນມາ, ຍົກມືຂຶ້ນເທິງທ້ອງຟ້າ. ມີຫຼາຍພັນມືໂບກໄປໂບກມາເທິງອາກາດເພື່ອເປັນສັນຍາລັກໃຫ້ແກ່ທີມທີ່ສະແດງໃຫ້ເຫັນຊັຍຊະນະແລະຄວາມຊື່ນຊອບ. ພວກເຮົາທຸກຄົນຕື່ນເຕັ້ນແລະຫຼົງຕົວໄປດ້ວຍຄວາມຊົມຊື່ນຍິນດີໃນຊ່ວງເວລາດັ່ງກ່າວ. ພວກເຮົາແຕ່ລະຄົນມີຄວາມຕັ້ງໃຈພາຍໃນຕົວຂອງພວກເຮົາເອງທີ່ມີຄວາມປາຖນາພາຍໃນໃຈທີ່ຈະໃຫ້ຄວາມເຄົາຣົບແລະສັຣເສີນບາງສິ່ງບາງຢ່າງທີ່ພວກເຮົາຮັກ-ແລະບໍ່ມີສິ່ງໃດແລະບໍ່ມີໃຜສົມຄວນໄດ້ຮັບການນະມັສການແລະສັຣເສີນຫຼາຍກ່ວາພຣະເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### <u>ສຶກສາພຣະຄັມພີ</u>

### 1. ເພງສັຣເສີນ 99:1-3

*1. ພຣະຜູ້ເປັນເຈົ້າຊົງຄອບຄອງໃຫ້ຊົນຊາດທັງຫຼາຍສະທ້ານຢ້ານກົວ ພຣະອົງຜູ້ປະທັບລະຫວ່າງພວກເຊຣູບິມໃຫ້ແຜ່ນດິນໂລກຫວັ່ນໄຫວ. 2. ພຣະຜູ້ເປັນເຈົ້າຍິ່ງໃຫຍ່ຢູ່ໃນຊີໂອນພຣະອົງສູງເດັ່ນຢູ່ເໜືອປະຊາຊາດທັງປວງ. 3. ໃຫ້ເຂົາສັຣເສີນພຣະນາມອັນຍິ່ງໃຫຍ່ແລະໜ້າຢ້ານກົວຂອງພຣະອົງເພາະພຣະນາມນັ້ນບໍຣິສຸດ.*

ທຸກເຫດຜົນທີ່ດີໃນຄວາມປາຖນາທີ່ດີທີ່ສຸດໃນການນະມັສການແມ່ນຢູ່ໃນພວກເຮົາທັງໝົດ: ພຣະເຈົ້າວາງມັນໄວ້ບ່ອນນັ້ນ, ໃນຄວາມຈິງ, ພຣະເຈົ້າໄດ້ສ້າງພວກເຮົາເພື່ອຈຸດປະສົງຂອງການນະມັສການຂອງພຣະອົງ. ບາງຄົນກ່າວຫາພຣະເຈົ້າວ່າເປັນການເຫັນແກ່**ຕົວ**ໃນການສ້າງພວກເຮົາມາໃຫ້ນະມັສການພຣະອົງ. ເຖິງຢ່າງໃດກໍ່ຕາມ, ແທນທີ່ຈະເຫັນຄຳສັ່ງຂອງພຣະເຈົ້າກ່ຽວກັບການນະມັສການພຣະອົງເປັນເໝືອນການເລົ່າເຣື່ອງ. ພວກເຮົາຄວນຖືວ່າມັນເປັນສິ່ງທີ່ໜ້າຮັກທີ່ສຸດທີ່ພຣະອົງເຮັດມາໂດຍຕລອດ. ເນື່ອງຈາກວ່າພຣະເຈົ້າເປັນເຣື່ອງທີ່ຍິ່ງໃຫ່ຽທີ່ສຸດ, ບໍຣິສຸດທີ່ສຸດ, ເປັນຄວາມຮັກທີ່ຍິ່ງໃຫ່ຽທີ່ສຸດໃນໂລກຈັກກະວານ, ຫຼັງຈາກນັ້ນກໍຊີ້ໃຫ້ພວກເຮົາໄປຫາພຣະອົງເອງນັ້ນເປັນຄວາມຮັກທີ່ຍິ່ງໃຫ່ຽທີ່ສຸດທີ່ພຣະອົງສາມາດເຮັດໄດ້. ພວກເຮົາຖືກຊັກຊວນໃຫ້ເຂົ້າມານະມັສການ, ແຕ່ການໃຫ້ການນະມັສການໃຜຜູ້ນຶ່ງຫຼືສິ່ງໃດນຶ່ງນັ້ນເປັນການໃຫ້ການນະມັສການກັບພຣະເຈົ້າລົດນ້ອຍລົງ, ແລະພວກເຮົາກໍ່ຈະຫຼົງຫາຍໄປເລີຍ. ພຣະເຈົ້າຮັກພວກເຮົາແລະປາຖນາຈະໃຫ້ສິ່ງທີ່ດີທີ່ສຸດສຳລັບພວກເຮົາ-ແລະສິ່ງທີ່ດີທີ່ສຸດກໍ່ຄືການທີ່ໄດ້ພົບກັບພຣະຜູ້ສ້າງຂອງພວກເຮົາໃນການນະມັສການ.

ພວກເຮົາໄປນະມັສການພຣະເຈົ້າຢູ່ໃສ? ຄວາມງົດງາມຂອງພຣະເຈົ້າແມ່ນບໍ່ມີຂອບເຂດຈຳກັດ; ຄວາມມີສະງ່າຣາສີຂອງພຣະອົງບໍ່ມີວັນສິ້ນສຸດ. ເມື່ອພວກເຮົາຢູ່ກັບພຣະອົງໃນສວັນ, ພວກເຮົາຄົ້ນພົບການມີຊີວິດນິຣັນແລະນະມັສການພຣະເຈົ້າສຳລັບທຸກການອັສຈັນຂອງພຣະອົງ. ແຕ່ເຖິງແມ່ນວ່າໃນປັດຈຸບັນນີ້ພວກເຮົາສາມາດນະມັສການພຣະອົງດ້ວຍສິ່ງທີ່ພວກເຮົາຮູ້ຈັກກ່ຽວກັບພຣະອົງ. ພວກເຮົາສັຣເສີນພຣະເຈົ້າເພາະຄວາມບໍຣິສຸດຂອງພຣະອົງ. ໃນຂໍ້ 3 ໄດ້ລົງທ້າຍດ້ວຍພຣະນາມນີ້ “ພຣະອົງບໍຣິສຸດ.” ພຣະອົງໄດ້ຖືກຈັດຕັ້ງໄວ້ແລະແຍກອອກຈາກການຊົງສ້າງທັງໝົດຂອງພຣະອົງ,ແລະບໍ່ມີໃຜຄືກັບພຣະອົງ, ໃນຂໍ້ 1-3 ນຳພາພວກເຮົາໄປສູ່ການປະກາດຄວາມບໍຣິສຸດຂອງພຣະເຈົ້າ.

- **ພຣະເຈົ້າພຽງຜູ້ດຽວເທົ່ານັ້ນທີ່ເປັນຜູ້ຄອບຄອງ.** ບໍ່ມີຜູ້ໃດຄອບຄອງ.
- **ພຣະເຈົ້າພຽງຜູ້ດຽວເທົ່ານັ້ນທີ່ນັ່ງຢູ່ເທິງບັນລັງຂອງພຣະອົງທີ່ລ້ອມຮອບໄປດ້ວຍບັນດາທູດສວັນທີ່ມີກຽດຕິຍົດຂອງພຣະອົງ, ຄືເຊຣູບິມ.** ບໍ່ມີຜູ້ໃດທີ່ຈະນັ່ງເທິງບັນລັງນັ້ນ.
- **ພຣະເຈົ້າພຽງຜູ້ດຽວເທົ່ານັ້ນທີ່ສູງສົ່ງແລະຮັບການສັຣເສີນ.** ບໍ່ມີພຣະໃດເທົ່າທຽມໄດ້.

ພຣະເຈົ້າສົມຄວນໄດ້ຮັບຄຳຍ້ອງຍໍສັຣເສີນຂອງພວກເຮົາເພາະວ່າບໍ່ມີໃຜທີ່ເໜືອກ່ວາພຣະອົງຫຼືແມ່ນແຕ່ຈະເທົ່າທຽມກັບພຣະອົງ. ພຣະອົງຊົງຢືນຢູ່ໃນຄວາມບໍຣິສຸດຂອງພຣະອົງ. ພວກເຮົາສັຣເສີນພຣະເຈົ້າສຳລັບຣິດເດດອັນຍິ່ງໃຫຍ່ຂອງພຣະອົງ. ພວກເຮົາເຫັນຣິດອຳນາດຂອງພຣະອົງຢູ່ໃນການຊົງສ້າງໂລກທີ່ຢູ່ອ້ອມຮອບພວກເຮົາ: ໃນດວງດາວຫຼວງຫຼາຍພາຍມາກໃນກາແລັກຊີຕ່າງໆທີ່ຢູ່ເໜືອພວກເຮົາແລະໃນພາກສ່ວນປະລຳມະນູທີ່ຕ້ອງເບິ່ງດ້ວຍກ້ອງຈຸລະທັດເພາະພວກເຮົາບໍ່ສາມາດເບິ່ງເຫັນໄດ້ດ້ວຍຕາເປົ່າ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດສ້າງສິ່ງເຫຼົ່ານັ້ນ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດປິ່ນປົວຈິດວິນຍານທີ່ຖືກບາດເຈັບຂອງພວກເຮົາ. ເປັນຫັຍງພວກເຮົາຈຶ່ງຄວນສັຣເສີນຄວາມຍິ່ງໃຫຍ່ແລະຣິດອຳນາດຂອງພຣະອົງ? ຄຳຕອບແມ່ນຂ້ອນຂ້າງງ່າຍດາຍ. ພຣະເຈົ້າແມ່ນມີອຳນາດໃນທຸກສິ່ງແລະພວກເຮົາບໍ່ມີຫັຍງໝົດ. ຖ້າວ່າຣິດອຳນາດແລະພະລັງອັນຍິ່ງໃຫຍ່ຂອງພຣະອົງຕໍ່ສູ້ພວກເຮົາ. ພວກເຮົາກໍ່ຫຼົບຕົວຢູ່ໃນຄວາມຢ້ານກົວແລະຢ້ານຢຳ. ຂອບພຣະຄຸນພຣະເຈົ້າ, ດ້ວຍອຳນາດທັງໝົດ “ພຣະເຈົ້າເປັນພຣະເຈົ້າຂອງພວກເຮົາທຸກຄົນ (ໂຣມ 8:13), ບໍ່ໄດ້ຕໍ່ຕ້ານພວກເຮົາ, ສະນັ້ນການຕອບຮັບຂອງພວກເຮົາຄວນຈະເປັນຄວາມເຄົາຣົບນັບຖືແລະຄວາມເຄົາຣົບນີ້ຄວນດຶງດູດໃຈພວກເຮົາໃຫ້ຮັກພຣະອົງແລະສັຣເສີນພຣະອົງ. ພວກເຮົານະມັສການເພາະພຣະອົງໄດ້ສ້າງພວກເຮົາມາເພື່ອໃຫ້ນະມັສການພຣະອົງ. ແລະພວກເຮົານະມັສການເພາະວ່າພຣະອົງຊົງສົມຄວນໄດ້ຮັບການນະມັສການສັຣເສີນຈາກພວກເຮົາ.

## 2. ເພງສັຣເສີນ 99:4-5

*4. ກະສັດຜູ້ຊົງມະຫິດທິຣິດ ຜູ້ຊົງຮັກຄວາມຍຸດຕິທັມ ພຣະອົງຊົງສະຖາປະນາຄວາມທ່ຽງທັມ ພຣະອົງປະກອບຄວາມຍຸດຕິທັມ ແລະຄວາມຊອບທັມຂຶ້ນໃນຢາໂຄບ. 5. ຈົ່ງຍົກຍໍພຣະກຽດພຣະຜູ້ເປັນເຈົ້າຄືພຣະເຈົ້າຂອງເຮົາແລະນະມັສການທີ່ແທ່ນຮອງພຣະບາດຂອງພຣະອົງເພາະພຣະອົງບໍຣິສຸດ.*

ຜູ້ຂຽນເພງສັຣເສີນໄດ້ເປີດເຜີຍຄຸນລັກສະນະຕ່າງໆຂອງພຣະເຈົ້າທີ່ຄວນຈະກະຕຸ້ນຈິດໃຈພວກເຮົາໃຫ້ສັຣເສີນ: ຄວາມຍຸດຕິທັມ, ຄວາມທ່ຽງທັມແລະຄວາມຊອບທັມຂອງພຣະອົງ. ພວກເຮົາທຸກຄົນເຫັນຄຸນຄ່າຄວາມຍຸດຕິທັມເພາະພວກເຮົາຢູ່ໃນຍຸກສຸດທ້າຍຂອງຄວາມຍຸດຕິທັມ. ແຕ່ໜ້າເສັຽດາຍ, ສິ່ງທີ່ເກີດຂຶ້ນຢູ່ເລື້ອຍໆໃນໂລກນີ້ຄືຄວາມບາບແລະຄວາມລົ້ນເຫຼືອ. ຜູ້ຄົນສ່ວນໃຫ່ຍເຫັນແກ່ຕົວ, ມີເຈດຕະນາຮ້າຍ, ແລະບາງຄັ້ງກໍ່ໂຫດຮ້າຍທີ່ສຸດ. ແລະເຖິງແມ່ນວ່າມັນບໍ່ໄດ້ເປັນການກະທຳໂດຍຕັ້ງໃຈ. ຄົນທີ່ລົ້ນເຫຼືອແລະຄົນບາບມັກຈະໃຊ້ອຳນາດທີ່ຖືກມອບໝາຍໄວ້ໃຫ້ໄປໃນທາງທີ່ຜິດ. ພວກເຮົາກໍ່ໄດ້ປະເຊີນກັບຄວາມບໍ່ຍຸດຕິທັມເມື່ອມີບາງສິ່ງບາງຢ່າງເຂົ້າໃຈຜິດແລະແລ້ວພວກເຮົາກໍ່ຖືກຕຳໜິຕິຕຽນຢ່າງຜິດພາດ. ແລະໃນໂລກທີ່ເຕັມໄປດ້ວຍຄວາມບາບນີ້, ພວກເຮົາຫຼາຍຄົນໄດ້ຕົກເປັນເຫຍື່ອຂອງຄວາມບໍ່ຍຸດຕິທັມເພາະວ່າເພດ, ຊົນເຜົ່າຫຼືພັກການເມືອງຂອງພວກເຮົາ.

ຄວາມບໍ່ຍຸດຕິທັມໃນທາງເພດຂອງພວກເຮົາ, ຊົນເຜົ່າ, ຫຼືພັກການເມືອງຂອງພວກເຮົາ. ຕໍ່ການປະເຊີນໜ້າກັບຄວາມຮູ້ສຶກຢ່າງນີ້, ໃຫ້ຈື່ຈຳຄົນທີ່ບໍ່ເຄີຍມີຄວາມຍຸດຕິທັມ. ຫຼາຍໄປກ່ວາ, ພຣະເຈົ້າຮັກຄວາມຍຸດຕິທັມ. ບາງຄົນອາດຖາມວ່າ, “ຖ້າພຣະເຈົ້າຮັກຄວາມຍຸດຕິທັມຫຼາຍທີ່ສຸດ, ເປັນຫັງງພຣະອົງບໍ່ຢືນຂຶ້ນກ້າວເຂົ້າໄປແລະແກ້ໄຂຄວາມບໍ່ຍຸດຕິທັມທີ່ຂ້າພະເຈົ້າກຳລັງປະເຊີນຢູ່? ໃນຄວາມຊອບທັມຂອງພຣະອົງ, ພຣະເຈົ້າຈະເຫັນວ່າຄວາມຍຸດຕິທັມໄດ້ນຳມາໃຊ້, ແຕ່ຄວາມຍຸດຕິທັມຂອງພຣະອົງບໍ່ໄດ້ຢູ່ໃນກາລະເວລາຂອງພວກເຮົາ. ດັ່ງທີ່ເປໂຕໄດ້ຂຽນໄວ້ກ່ຽວກັບການພິພາກສາທີ່ຈະມາເຖິງແລະວັນຂອງອົງພຣະຜູ້ເປັນເຈົ້າທີ່ຈະມາເຖິງ, ທ່ານກ່າວວ່າ, "ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າໃນເຣື່ອງພຣະສັນຍາຂອງພຣະອົງເໝືອນດັ່ງບາງຄົນຄິດວ່າຊ້າແຕ່ພຣະອົງອົດກັ້ນພຣະທັຍໄວ້ເພາະເຫັນແກ່ທ່ານເພາະພຣະອົງບໍ່ປະໃຫ້ຜູ້ໃດຜູ້ນຶ່ງໄດ້ຈິບຫາຍແຕ່ຊົງປາຖນາໃຫ້ມາເຖິງການຖິ້ມໃຈເກົ່າເອົາໃຈໃໝ່" (2 ເປໂຕ 3:9).

ຢ່າໃຫ້ພວກເຮົາຄິດວ່າພຣະເຈົ້າບໍ່ເຂົ້າໃຈຄວາມບໍ່ຍຸດຕິທັມທີ່ພວກເຮົາກຳລັງປະເຊີນຢູ່, ຈົ່ງລະນຶກເຖິງພຣະເຢຊູຜູ້ປະສົບກັບຄວາມບໍ່ຍຸດຕິທັມອັນຍິ່ງໃຫ່ຍທີ່ສຸດທີ່ບໍ່ເຄີຍມີມາ. ພຣະເຢຊູບໍ່ເຄີຍເຮັດບາບ, ແຕ່ການຈັບກຸ່ມຜ່ານຂະບວນການບໍ່ຍຸດຕິທັມ, ການທົດລອງແລະລວມໄປເຖິງການຄຶງໄວ້ທີ່ບໍ່ຍຸດຕິທັມ, ພຣະອົງໄດ້ກາຍເປັນຜູ້ຮັບບາບຂອງພວກເຮົາ “ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ.” (2 ໂກຣິນໂທ 5: 21). ພຣະອົງເຕັມໃຈແບກບາບແລະຮັບເອົາຄວາມອັບອາຍຂອງພວກເຮົາ, ທົນທຸກທໍລະມານດ້ວຍຄວາມໂຫດຮ້າຍແລະຮັບເອົາການລົງໂທດໂດຍມືຂອງຄົນຊົ່ວ, ຄົນບໍ່ຍຸດຕິທັມ, ເພື່ອວ່າພວກເຮົາຈະໄດ້ຮັບຊີວິດນິຣັນໂດຍຜ່ານທາງພຣະອົງ. ພວກເຮົາສາມາດໃຫ້ຄຳສັຣເສີນພຣະເຈົ້າເພາະຄວາມຍຸດຕິທັມແລະຄວາມຊອບທັມຂອງພຣະອົງໃນປັດຈຸບັນນີ້ໂດຍຜ່ານທາງອົງພຣະເຢຊູຄຣິດຂອງພວກເຮົາ. ເຖິງແມ່ນວ່າພວກເຮົາຈະປະເຊີນກັບຄວາມບໍ່ຍຸດຕິທັມ. ພວກເຮົາຍັງສາມາດສັຣເສີນພຣະເຈົ້າແລະໄວ້ວາງໃຈໃນການທຳງານຂອງພຣະອົງແລະຄວາມຊອບທັມຂອງພຣະອົງ."ພຣະຜູ້ເປັນເຈົ້າຄອຍຖ້າທີ່ຈະຊົງພຣະກະຣຸນາເຈົ້າທັງຫຼາຍພຣະອົງຈຶ່ງເປັນທີ່ຍົກຍ້ອງເພື່ອຈະຊົງເມດຕາເຈົ້າເພາະວ່າພຣະຜູ້ເປັນເຈົ້າຊົງເປັນເຈົ້າແຫ່ງຄວາມຍຸດຕິທັມບັນດາຜູ້ທີ່ຄອຍຖ້າພຣະອົງຈະໄດ້ຮັບພຣະພອນ. (ເອຊາຢາ 30:18). ພວກເຮົາຄວນຕອບສນອງແນວໃດຕໍ່ຄວາມຍຸດຕິທັມ, ຄວາມຮັກແລະຄວາມຍຸດຕິທັມຂອງພຣະເຈົ້າ? ຍົກຍ້ອງອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຮົາ. ຈົ່ງຂາບໄຫ້ວແທ່ນພຣະບາດຂອງພຣະອົງ. ພຣະອົງບໍຣິສຸດ (ຂໍ້ 5). ເຖິງແມ່ນໃນທ່າມກາງຄວາມບໍ່ຍຸດຕິທັມ, ພວກເຮົາກໍ່ສາມາດຊູມືຂຶ້ນເພື່ອສັຣເສີນພຣະອົງ. ເຖິງແມ່ນວ່າໃນຊ່ວງເວລາທີ່ມີຄວາມຫຍຸ້ງຍາກໃນຊີວິດຂອງພວກເຮົາກໍ່ສາມາດເປັ່ງສຽງຮ້ອງສຸດລົມຫາຍໃຈຂອງພວກເຮົາແລະນະມັສການພຣະເຈົ້າຂອງພວກເຮົາຍ້ອນຫັງງ? ເພາະພຣະອົງຊົງເປັນຜູ້ທີ່ມີຄ່າ, ແລະພຣະອົງຈະເຮັດໃຫ້ສິ່ງທີ່ຖືກຕ້ອງສເມີໄປແລະຈະບໍ່ປ່ອຍໃຫ້ຜ່ານພົ້ນໄປ.

### 3. ເພງສັຣເສີນ 99:6-9

*6. ໂມເຊແລະອາໂຣນຢູ່ໃນພວກປະໂຣຫິດຂອງພຣະອົງ ຊາມູເອນຢູ່ໃນທີ່ທູນອອກພຣະນາມຂອງພຣະອົງດ້ວຍ ພວກເພິ່ນຮ້ອງທູນພຣະຜູ້ເປັນເຈົ້າແລະພຣະອົງຕອບເພິ່ນເຫຼົ່ານັ້ນ. 7. ພຣະອົງກ່າວກັບພວກເພິ່ນໃນເສົາເມກ ເພິ່ນທັງປວງໄດ້ຮັກສາບັນດາພຣະໂອວາດຂອງພຣະອົງແລະກົດທີ່ພຣະອົງປະທານແກ່ເພິ່ນ. 8. ຂ້າແດ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງຂ້ານ້ອຍທັງຫຼາຍພຣະອົງຕອບເພິ່ນເຫຼົ່ານັ້ນ ພຣະອົງເປັນພຣະເຈົ້າຜູ້ຍົກໂທດເພິ່ນເຫຼົ່ານັ້ນແຕ່ເປັນຜູ້ສນອງການກະທຳຜິດຂອງພວກເພິ່ນ. 9. ຈົ່ງຍົກຍໍພຣະກຽດພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາແລະນະມັສການທີ່ພູເຂົາອັນບໍຣິສຸດຂອງພຣະອົງເພາະພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາບໍຣິສຸດ.*

ຜູ້ຂຽນເພງສັຣເສີນໄດ້ເຫດຜົນອີກຢ່າງນຶ່ງທີ່ພວກເຮົາຄວນຈະຕັ້ງໃຈນະມັສການພຣະເຈົ້າ-ພຣະອົງໄດ້ຍິນແລະຕອບພວກເຮົາ! ພຣະເຈົ້າ, ຜູ້ທີ່ມີສະຕິປັນຍາແລະທີ່ພະລັງອຳນາດທີ່ສຸດໃນໂລກຈັກກະວານນີ້, ແນ່ນອນຄຳຕອບ

ສຽງຮຽກຮ້ອງຂອງໄພ່ພົນຂອງພຣະອົງ! ພຣະເຈົ້າຜູ້ຊົງມີຣິດເດດທຸກປະການພ້ອມທີ່ຈະຕອບຄໍາຂໍຮ້ອງຂອງພວກເຮົາ! ຜູ້ຂຽນເພງສັຣເສີນໄດ້ຍົກເອົາຕົວຢ່າງຂອງໂມເຊ, ອາໂຣນ, ແລະຊາມູເອນ, ປະໂຣຫິດທີ່ຮ້ອງອອກນາມຊື່ຂອງພຣະຜູ້ເປັນເຈົ້າດ້ວຍຄວາມທຸກທໍຣະມານ. ເມື່ອການທົດລອງແລະຄວາມທຸກຍາກລໍາບາກເຂົ້າມາ, ພວກເພິ່ນບໍ່ຫັນໜ້າໜີດ້ວຍຄວາມສິ້ນຫວັງໄປທັງໝົດ, ແຕ່ພວກເພິ່ນໄດ້ເຮັດເໝືອນຢ່າງເດັກນ້ອຍທົ່ວໄປເຮັດເມື່ອປະສົບກັບບັນຫາຫຍຸ້ງຍາກ. ພວກເພິ່ນຮ້ອງຫາພໍ່ຂອງພວກເພິ່ນ-"ພຣະຜູ້ເປັນເຈົ້າ."

➢ ເມື່ອຊາວອິດສະລາເອນຈົ່ມຕໍ່ວ່າເພາະຂາດແຄນນໍ້າດື່ມບໍ່ມີນໍ້າ, ໂມເຊໄດ້ອະທິຖານຫາພຣະຜູ້ເປັນເຈົ້າ. ແລະ ພຣະເຈົ້າໄດ້ຈັດຫານໍ້າໃຫ້ຢ່າງມະຫັສຈັນ (ອົບພະຍົບ 17:1-7).

➢ ເມື່ອພຣະເຈົ້າພ້ອມແລ້ວທີ່ຈະທໍາລາຍຊາວອິດສະລາເອນແລະກໍ່ຕັ້ງຂຶ້ນໃໝ່; ໂມເຊໄດ້ອະທິຖານຂໍຮ້ອງຕໍ່ພຣະເຈົ້າ. ພຣະເຈົ້າຕອບແລະຍົກໂທດໃຫ້ກັບປະຊາຊົນ (ຈົດເຊັນບັນຊີ 14:11-2).

➢ ຊາມູເອນໄດ້ອະທິຖານເພື່ອປະຊາຊົນໃນຫຼາຍໆຄັ້ງ (1 ຊາມູເອນ 7:2-5; 8:6), ແລະທ່ານໄດ້ສິ້ນສຸດການຮັບໃຊ້ໄດ້ຫຼາຍປີໂດຍກ່າວວ່າ, “ຂ້າພະເຈົ້າ, ຂ້າພະເຈົ້າສາບານວ່າຂ້າພະເຈົ້າຈະບໍ່ເຮັດບາບຕໍ່ສູ້ພຣະຜູ້ເປັນເຈົ້າໂດຍການຢຸດເຊົາອະທິຖານ” (12:23).

ພຣະເຈົ້າຕອບພວກເພິ່ນທຸກຄັ້ງທີ່ພວກເພິ່ນຮ້ອງຫາພຣະອົງດ້ວຍໃຈສັດທາ. ພຣະເຈົ້າຕອບເພາະພຣະອົງເປັນ“ພຣະເຈົ້າແຫ່ງການໃຫ້ອະພັຍແກ່ພວກເພິ່ນ, ແຕ່ເປັນການແກ້ແຄ້ນການກະທໍາທີ່ຊົ່ວຮ້າຍຂອງພວກເພິ່ນ” (ຂໍ້ 8). ສິ່ງທີ່ໜ້າງຶດງໍ້ໃນຂໍ້ນີ້ແມ່ນມັນບໍ່ໄດ້ບອກວ່າພຣະເຈົ້າໄດ້ແກ້ແຄ້ນການເຮັດຜິດພາດຕໍ່ພວກເພິ່ນ. ແຕ່ມັນບອກວ່າພຣະອົງໄດ້ແກ້ແຄ້ນຄວາມຜິດຂອງພວກເພິ່ນ. ທີ່ບໍ່ຄືກັບມະນຸດທີ່ລົ້ມລົງ, ພຣະເຈົ້າບໍ່ໄດ້ແກ້ແຄ້ນຄວາມຜິດຂອງພວກເຮົາດ້ວຍຄວາມອັນຕຣາຍຫຼືໂກດແຄ້ນ; ພຣະອົງແກ້ແຄ້ນຄວາມຜິດຂອງພວກເຮົາດ້ວຍຄວາມຮັກແລະການໃຫ້ອະພັຍ. ການຮັບຮູ້ເຖິງການຕອບຮັບຂອງພຣະເຈົ້າຕໍ່ພວກເຮົາເຮັດໃຫ້ພວກເຮົາກັບຄືນສູ່ການນະມັສການ.

## ການນໍາໃຊ້ໃນຊີວິດ.

**ທ່ານຈະດໍາເນີນຊີວິດຕາມຄໍາໝັ້ນສັນຍາຂອງທ່ານຕໍ່ພຣະເຈົ້າໂດຍຜ່ານການນະມັດສະການແລະການສັນລະເສີນຢ່າງໃດ? ຈົ່ງເລືອກຂໍ້ນຶ່ງແບບວິທີໃຊ້ຕໍ່ລົງໄປນີ້.**

❖ **ປະເມີນຜົນ.** ຈົດລາຍລະອຽດລາຍການທີ່ທ່ານສຸມໃຈໃສ່ເຮັດໃນອາທິດນີ້ແລະວິທີທີ່ທ່ານຈະໃຊ້ເວລາຂອງທ່ານ. ໃຫ້ການປະເມີນຜົນດ້ວຍຄວາມຊື່ສັດແລະກໍານົດຖ້າວ່າສິ່ງເຫຼົ່ານັ້ນເປັນທີ່ໜ້າເຄົາລົບ. ຂໍໃຫ້ພຣະເຈົ້າເປີດຈິດໄຂໃຈຂອງທ່ານແລະເພື່ອໃຫ້ເອົາພຣະອົງເປັນທີ່ນຶ່ງໃນການນະມັສການຂອງທ່ານ.

❖ **ຈົ່ງໄວ້ວາງໃຈ.** ຖ້າທ່ານກໍາລັງຢູ່ໃນສະຖານະການທີ່ເຫັນວ່າບໍ່ຍຸດຕິທັມ, ໃຫ້ພິຈາລະນາເບິ່ງວິທີທີ່ທ່ານໄດ້ຕອບໂຕ້ແລະຄວນຕອບສນອງ. ຍົກບັນຫານີ້ມາສູ່ພຣະເຈົ້າໃນການອະທິຖານແລະໄວ້ວາງໃຈໃນພຣະອົງໃນການຕອບຮັບ. ສັຣເສີນພຣະອົງສໍາລັບຄວາມຮັກແລະຄວາມຍຸດຕິທັມຂອງພຣະອົງ.

❖ **ນະມັສການ.** ກໍານົດມື້ນຶ່ງຫຼືເຄິ່ງມື້ສໍາລັບການນະມັສການທີ່ຈະໃຫ້ເວລາກັບການນະມັສການ-ພຽງແຕ່ທ່ານແລະພຣະເຈົ້າເທົ່ານັ້ນ. ສາລະພາບອ່ານຂໍ້ພຣະຄັມພີຕໍ່ພຣະເຈົ້າເປັນຮູບແບບຂອງການນະມັສການ. ສຸມໃຈໃສ່ພຣະລັກສະນະຂອງພຣະເຈົ້າແລະທຸກສິ່ງທີ່ພຣະອົງໄດ້ເຮັດເພື່ອທ່ານ. ຂໍໃຫ້ຈຸດສຸມໃຈນັ້ນ, ນໍາພາທ່ານໄປສູ່ການນະມັສການແລະການເດີນທີ່ໃກ້ຊິດກັບພຣະຄຣິດ.

ພວກເຮົາໃຫ້ຄໍາຍ້ອງຍໍສັຣເສີນທີ່ຄຶກຄື້ນຂອງພວກເຮົາກັບຫຼາຍສິ່ງຫຼາຍຢ່າງໃນວັດທະນະທໍາຂອງພວກເຮົາ. ແຕ່ບໍ່ມີໃຜແລະບໍ່ມີສິ່ງໃດທີ່ສົມຄວນໄດ້ຮັບການຍ້ອງຍໍນະມັສການຂອງພວກເຮົາຍົກເວັ້ນພຣະເຈົ້າ. ແລະພຣະອົງມີຄ່າສົມຄວນຫຼາຍກ່ວາທີ່ພວກເຮົາຄາດຄິດທີ່ຈະຖວາຍໃຫ້.